ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1592 /ອຄ.ທຄວ

ນະຄອນຫຼວງວຽງຈັນ, ວັນທີ 26 ສິງຫາ 2013

# ແຈ້ງການ

ເຖິງ: - ພະແນກອຸດສາຫະກຳອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ

- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ
- ນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ

ເລື່ອງ: ບັນຊີປະເພດທຸລະກິດເກືອດຫ້າມ

ເພື່ອໃຫ້ປະຊາຊົນບັນດາເຜົ່າ ແລະ ນັກລົງທຶນ (ພາຍໃນ / ຕ່າງປະເທດ) ມີຄວາມສະດວກ ໃນການພິຈາລະນາ ກ່ອນການປະກອບທຸລະກິດໃດໜຶ່ງ ຢູ່ປະເທດເຮົາ ວ່າ : ມີທຸລະກິດປະເພດໃດທີ່ກົດໝາຍເກືອດຫ້າມ, ກະຊວງອຸດສາຫະກຳ ແລະ ການຄ້າ (ບົນພື້ນຖານການຄົ້ນຄວ້າ ສະເໜີຂອງບັນດາຂະແໜງການທີ່ກ່ຽວຂ້ອງ), ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງ ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ປະເພດທຸລະກິດເກືອດຫ້າມ ແມ່ນປະເພດທຸລະກິດ ທີ່ບໍ່ອະນຸຍາດໃຫ້ສ້າງຕັ້ງ ແລະ ເຄື່ອນໄຫວດຳເນີນທຸລະກິດ ຢູ່ ສປປ ລາວ;

2. ການອະນຸຍາດ ຫລື ຂຶ້ນທະບຽນວິສາຫະກິດໃຫ້ບຸກຄົນ ຫລື ນິຕິບຸກຄົນທີ່ບໍ່ຖືກຕ້ອງ ຕາມແຈ້ງການສະບັບນີ້ ລ້ວນແຕ່ເປັນໂມຄະ. ຜູ້ລະເມີດ ຕ້ອງຮັບຜິດຊອບຕໍ່ໜ້າກົດໝາຍ;

3. ລາຍການປະເພດທຸລະກິດເກືອດຫ້າມ ກຳນົດໃນບັນຊີ ຂໍ 01-2013 (ຄັດຕິດມາພ້ອມນີ້) ;

4. ໃນໄລຍະຈັດຕັ້ງປະຕິບັດ ແຈ້ງການສະບັບນີ້ ຫາກພາກສ່ວນ ຫລື ຂະແໜງການໃດ ເຫັນວ່າມີອັນຍັງບໍ່ທັນສອດຄ່ອງ ຢາກເພີ່ມເຂົ້າ ຫລື ຕັດອອກຈາກບັນຊີດັ່ງກ່າວ ໃຫ້ແຈ້ງກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອປັບປຸງ ປະກາດໃຊ້ເພີ່ມເຕີມຕໍ່ໄປ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ. ໆລໆ

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ກະຊວງອຸດສາຫະກຳ ແລະ ການຄ້າ

ລັດຖະມົນຕີ

ດຣ.ນາມ ວິຍະເກດ

# ບັນຊີ ຂໍ 01 - 2013
# ບັນຊີປະເພດທຸລະກິດເກືອດຫ້າມດຳເນີນທຸລະກິດ ຢູ່ ສປປ ລາວ

| ລ/ດ | ປະເພດທຸລະກິດ | ນິຕິກຳ | ພາກສ່ວນ ຮັບຜິດຊອບ |
|---|---|---|---|
| 1 | ສານເຄມີອັນຕະລາຍປະເພດທີ 1 ( ເອກະສານຊ້ອນທ້າຍ 01 ຂອງ ຂໍ້ຕົກລົງສະບັບ ເລກທີ 1041/ອຄ.ກອທ, ລົງວັນທີ 28 /05/ 12) | - ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງທາດ ແລະ ທາດເຄມີອຸດສາຫະກຳ ເລກທີ 1041/ອຄ.ກອທ, ລົງວັນທີ 28 /05/ 2012;<br>- ດຳລັດວ່າດ້ວຍການນຳເຂົ້າ ແລະ ສົ່ງອອກສິນຄ້າ ເລກທີ 114/ລບ, ລົງວັນທີ 6 ເມສາ 2011 | ກຊ ອຄ |
| 2 | ແຮ່ທາດກຳມັນຕະພາບລັງສີທຸກຊະນິດ | - ດຳລັດວ່າດ້ວຍການສົ່ງອອກຜະລິດຕະພັນແຮ່ທາດ ເລກທີ 90/ນຍ, ລົງວັນທີ 09/06/2008 ແລະ<br>- ກົດໝາຍ ວ່າດ້ວຍແຮ່ທາດ ເລກທີ 02/ສພຊ, ລົງວັນທີ 20/12/2011 | ກຊ ພບ |
| 3 | ລູກກະສູນ ແລະ ອາວຸດທຸກຊະນິດ( ຍົກເວັ້ນທາດລະເບີດ ເພື່ອຮັບໃຊ້ອຸດສາຫະກຳ ແຕ່ຕ້ອງໄດ້ຮັບອະນຸຍາດສະເພາະ), ພາຫະນະຮັບໃຊ້ສົງຄາມ. | - ກົດໝາຍອາຍາເລກທີ 12/ສພຊ, ລົງວັນທີ 9 ພະຈິກ 2005<br>- ຂໍ້ຕົກລົງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທາດລະເບີດ ຢູ່ ສປປ ລາວ ເລກທີ 39/ນຍ, ລົງວັນທີ 12 ກໍລະກົດ 2001 | ກຊ ປທ |
| 4 | ຝິ່ນ, ເມັດຝິ່ນ, ດອກຝິ່ນ, ແກ່ນຝິ່ນ, ດອກຝິ່ນແຫ້ງ, ຝິ່ນສຳເລັດຮູບ, ອື່ນໆທີ່ເຮັດຈາກຝິ່ນ, ໃບໂກໂກ້, ກັນຊາໃນຮູບແບບຕ່າງໆ, ໂຄເຄນ ແລະ ອະນຸພັນຂອງມັນ. | - ກົດໝາຍອາຍາເລກທີ 12/ສພຊ,ລົງວັນທີ 9 ພະຈິກ 2005<br>- ກົດໝາຍວ່າດ້ວຍຢາເສບຕິດ ເລກທີ 10/ສພຊ, 25/12/2007<br>- ດຳລັດຈັດຕັ້ງປະຕິບັດກົດໝາຍວ່າ ດ້ວຍຢາເສບຕິດ ເລກທີ 076/ນຍ, ລົງວັນທີ 20 ກຸມພາ 2009 | ຄລບ,<br>ກຊ ປກສ |
| 5 | ເຈ້ຍພິມເງິນ, ນ້ຳມຶກພິມເງິນ, ເຄື່ອງຈັກພິມເງິນ ແລະ ເຄື່ອງຈັກຫຼອມເງິນຫຼຽນ | - ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999 | ທຫລ |
| 6 | ປະເພດທຸລະກິດເກືອດຫ້າມຕ່າງໆຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ | - ບັນດາລະບຽບການຂອງຂະແໜງການກ່ຽວຂ້ອງ | ຂະແໜງການ ກ່ຽວຂ້ອງ |

**ໝາຍເຫດ :**

ປະເພດທຸລະກິດໃນບັນຊີ ຂໍ 01 – 2013 ແມ່ນໄດ້ຄົ້ນຄວ້າ ແລະ ລວບລວມມາຈາກ ຄຳສະເໜີ ຂອງບັນດາກະຊວງ ທີ່ກ່ຽວຂ້ອງ.